ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 31 ກໍລະກົດ ຫາ 04 ສິງຫາ 2023



## ການສົ່ງອອກພືດ ແລະ ສັດ ປະຈຳເດືອນ ມິຖຸນາ 2023

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ການສົ່ງອອກພືດ ແລະ ສັດ ປະຈຳເດືອນ ມິຖຸນາ 2023

ຈາກບົດລາຍງານສະພາບການປະຕິບັດວຽກງານປະຈຳເດືອນກໍລະກົດ ແລະ ແຜນວຽກຈຸດສຸມ ເດືອນສິງຫາ 2023 ຂອງຂະແໜງການກະສິກຳ ແລະ ປ່າໄມ້ ສະບັບເລກທີ 3436/ກປ, ລົງວັນທີ 31 ກໍລະກົດ 2023 ໃຫ້ຮູ້ກ່ຽວກັບຄວາມຄືບໜ້າ ການຜະລິດພືດສິນຄ້າລະດູຝົນ 2023 ໃຫ້ຮູ້ວ່າປັດຈຸບັນປະຕິບັດໄດ້ 300.578 ເຮັກຕາ ເທົ່າກັບ 49% ທຽບໃສ່ເນື້ອທີ່ແຜນການ 612.530 ເຮັກຕາ, ເນື້ອທີ່ເກັບກ່ຽວ 603.740 ເຮັກຕາ ແລະ ຄາດຄະເນຜົນຜະລິດ ປະມານ 8.368.500 ໂຕນ, ໂດຍແນໃສ່ພືດທີ່ໄດ້ເຊັນສັນຍາກັບບັນດາປະເທດຄູ່ຄ້າ ແລະ ມີທ່າແຮງບົ່ມຊ້ອນຂອງແຕ່ລະພື້ນທີ່ ເຊັ່ນ: ກາເຟ, ສາລີແຂງ, ຊາ, ມັນຕົ້ນ, ກ້ວຍ ແລະ ອື່ນໆ;

- **ການສົ່ງອອກ ສິນຄ້າກະສິກຳ ແລະ ປ່າໄມ້**:

ຜ່ານດ່ານກັກກັນພືດສາກົນ ນັບແຕ່ວັນທີ 01-30 ມິຖຸນາ 2023 ມີທັງໝົດຈຳນວນ 158.508 ໂຕນ ມີມູນຄ່າທັງໝົດ 47.040.375 ໂດລາສະຫະລັດ. ໃນຈຳນວນດັ່ງກ່າວ ລາຍການພືດທີ່ສົ່ງອອກພົ້ນເດັ່ນກວ່າໝູ່ພາຍໃນເດືອນໄດ້ແກ່:ໝາກກ້ວຍ ຈຳນວນ 55.561 ໂຕນ, ມູນຄ່າ 15.152,905 ໂດລາສະຫະລັດ (ສົ່ງໄປ ຈີນ, ຫວຽດນາມ ແລະ ໄທ); ມັນຕົ້ນ ຈຳນວນ 66.223 ໂຕນ, ມູນຄ່າ 8.916.390 ໂດລາສະຫະລັດ (ສົ່ງໄປ ຈີນ, ຫວຽດນາມ ແລະ ໄທ); ກາເຟ ຈຳນວນ 4.206 ໂຕນ, ມູນຄ່າ 10.653.223 ໂດລາສະຫະລັດ (ສົ່ງໄປ ຈີນ, ໄທ, ຫວຽດນາມ ແລະ ຍີ່ປຸ່ນ); ຂີງ ຈຳນວນ 3.426 ໂຕນ, ມູນຄ່າ 1.051.963 ໂດລາສະຫະລັດ (ສົ່ງໄປ ຈີນ, ຫວຽດນາມ ແລະ ໄທ); ສາລີ ຈຳນວນ 2.979 ໂຕນ, ມູນຄ່າ 328.014 ໂດລາສະຫະລັດ (ສົ່ງໄປ ຈີນ, ໄທ ແລະ ຫວຽດນາມ).

- **ການນຳເຂົ້າພືດ ແລະ ຜະລິດຕະພັນພືດ**:

ຜ່ານດ່ານກັກກັນພືດ ນັບແຕ່ ວັນທີ 01-30 ມິຖຸນາ 2023 ຈຳນວນ 34.413 ໂຕນ ມີມູນຄ່າທັງໝົດ 7.090.755 ໂດລາສະຫະລັດ, ໃນຈຳນວນດັ່ງກ່າວ ພືດທີ່ນຳເຂົ້າຫຼາຍກວ່າໝູ່ພາຍໃນເດືອນໄດ້ແກ່: ໄມ້ກະຖິນນະລົງ ຈຳນວນ 21.465 ໂຕນ,



ມູນຄ່າ 1.266.435 ໂດລາສະຫະລັດ (ນຳເຂົ້າຈາກ ໄທ); ກາກຖົ່ວເຫຼືອງ ຈຳນວນ 3.896 ໂຕນ, ມູນຄ່າ 2.148.933 ໂດລາສະຫະລັດ (ນຳເຂົ້າຈາກ ໄທ ແລະ ສະຫະລັດອາເມຣິກາ); ເຂົ້າຫວິດ ຈຳນວນ 1.671 ໂຕນ, ມູນຄ່າ 1.247.358 ໂດລາສະຫະລັດ (ນຳເຂົ້າຈາກ ຈີນ ແລະ ເຢຍລະມັນ); ເຂົ້າເມັດຫັກ ຈຳນວນ 1.451 ໂຕນ, ມູນຄ່າ 110.297 ໂດລາສະຫະລັດ (ນຳເຂົ້າຈາກ ໄທ, ມຽນມ້າ ແລະ ຫວຽດນາມ); ເບ້ຍກ້ອຍ ຈຳນວນ 765.500 ເບ້ຍ, ມູນຄ່າ 72.990 ໂດລາສະຫະລັດ (ນຳເຂົ້າຈາກ ຫວຽດນາມ);

- **ການສົ່ງອອກສັດ**:

ໃນໜຶ່ງເດືອນຜ່ານມາ ໄດ້ທັງໝົດ 100 ໂຕ (ໝູ 3 ໂຕ, ແບ້ 17 ໂຕ ແລະ ສັດປີກ 80 ໂຕ) ຄິດເປັນມູນຄ່າ 2.594,74 ໂດລາສະຫະລັດ ແລະ ຕິດຕາມກວດກາ ການສົ່ງຜ່ານສັດ ໄປປະເທດທີ 3 ຢູ່ບັນດາດ່ານຕ່າງໆ ໃນຂອບເຂດທົ່ວປະເທດມີສັດສົ່ງຜ່ານຈຳນວນ 542 ໂຕ (ຄວາຍ 15 ໂຕ ແລະ ງົວ 527 ໂຕ);

- ໃນໜຶ່ງເດືອນຜ່ານມາ ສາມາດສົ່ງອອກຜະລິດຕະພັນສັດ ໄດ້ທັງໝົດ 10.000 ກິໂລກຣາມ (ຊີ້ນຄວາຍອົບແຫ້ງ 8.000 ກິໂລກຣາມ ແລະ ຊີ້ນໝູອົບແຫ້ງ 2.000 ກິໂລກຣາມ) ລວມມູນຄ່າທັງໝົດ 114.600 ໂດລາສະຫາລັດ;

- **ການຜະລິດສັດເປັນສິນຄ້າ**:

ປັດຈຸບັນ ພວກເຮົາມີງົວຊີ້ນພັນປະສົມ ກຽມພ້ອມເພື່ອສົ່ງອອກໄປ ສປ ຈີນ ແລ້ວປະມານ 20 ພັນໂຕ ລໍຖ້າແຕ່ການອະນຸຍາດນຳເຂົ້າ Import Permit ຈາກຝ່າຍຈີນ

- ສຳເລັດ ການສົ່ງໃບຢັ້ງຢືນສຸຂະພາບສັດໄປຫາ ກົມໃຫຍ່ພາສີຈີນ ໂດຍຜ່ານ ກະຊວງການຕ່າງປະເທດ, ປັດຈຸບັນແມ່ນຢູ່ໃນຂັ້ນຕອນລໍຖ້າການຕອບຮັບໃບຢັ້ງຢືນສຸຂະພາບສັດ ທີ່ທັງສອງຝ່າຍໄດ້ຕົກລົງກັນ;

- ໄດ້ກະກຽມສົ່ງແຜນເຝົ້າລະວັງຕິດຕາມຂອງພະຍາດງົວບ້າ ແລະ ໄດ້ລາຍງານຄວາມພ້ອມຕ່າງໆ ກ່ຽວກັບລະບົບການກວດສອບຄືນຫຼັງກໍ່ຄືການຕິດ

ເປີຫູ ໃຫ້ທາງຝ່າຍຈີນຮັບຮູ້;

- ສືບຕໍ່ ປະສານຫາບັນດາແຂວງ ແລະ ນະຄອນຫຼວງວຽງຈັນ, ບໍລິສັດ ແລະ ຜູ້ປະກອບການ ທີ່ສົນໃຈເຂົ້າຮ່ວມກະກຽມສົ່ງງົວໄປ ສປ ຈີນ ສົ່ງຈຸດພິກັດຂອງຟາມລ້ຽງງົວຂອງຕົນ ເພື່ອເຮັດໃຫ້ສາມາດຮູ້ສະຖານທີ່ຕັ້ງຂອງຟາມຕ່າງໆທີ່ຈະຕິດຕາມກ່ອນຈະສົ່ງງົວອອກ;

- ໄດ້ຊຸກຍູ້ໃຫ້ບໍລິສັດ ແລະ ຜູ້ປະກອບການດຳເນີນກິດຈະການ ດ້ານການລ້ຽງສັດໃຫ້ຖືກຕ້ອງຕາມລະບຽບກົດໝາຍ ຮັບປະກັນການຂະຫຍາຍຕົວທາງດ້ານການຜະລິດ ໃຫ້ໄດ້ທັງປະລິມານ ແລະຄຸນນະພາບ ເພື່ອຮັບປະກັນການສະໜອງພາຍໃນໃຫ້ພຽງພໍ ແລະ ການຜະລິດເປັນສິນຄ້າເພື່ອສົ່ງອອກ;

- ໄດ້ກະກຽມການກວດກາສັດ ກ່ອນການນຳເຂົ້າໂຮງຂ້າ ແລະ ກວດກາຄຸນນະພາບຜະລິດຕະພັນຊີ້ນງົວ ເປັນຕົ້ນແມ່ນການກວດຫາເຊື້ອຈຸລິນຊີ, ສານຕົກຄ້າງ ແລະ ການກວດກາທາງຟີຊິກ;

- ໄດ້ຊຸກຍູ້ສົ່ງເສີມການລ້ຽງປາໃນໜອງ, ກະຊັງ ແລະ ການຜະລິດລູກປາ ໃຫ້ຂະຫຍາຍຕົວກວ້າງຂວາງ ເພື່ອສະໜອງລູກປານ້ອຍ ແລະ ປາຊີ້ນໃຫ້ພຽງພໍກັບຕະຫຼາດພາຍໃນ.



ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳມອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂາວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;